

# ການເລົ່າຂ່າວເລື່ອງຈິງ: ຢາວັກຊີນປ້ອງກັນພະຍາດ COVID-19 ແລະ ການຖືພາ

## ເກີດຂໍ້ມູນທີ່ບໍ່ມີມູນຄວາມຈິງຫຼາຍປະການກ່ຽວກັບຢາວັກຊີນປ້ອງກັນພະຍາດ COVID-19 ແລະ ການຖືພາ. ມາຊອກຫາຂໍ້ແທ້ຈິງທີ່ຮູ້ຈັກດີກັນມາ!

### ຢາວັກຊີນປ້ອງກັນພະຍາດ COVID-19 ຕ່າງໆແມ່ນມີຄວາມປອດໄພຕໍ່ການໃຊ້ກ່ອນ, ໃນລະຫວ່າງ ແລະ ຫຼັງການຖືພາ.

ການສັກຢາວັກຊີນລະຫວ່າງການຖືພາແມ່ນໄດ້ຮັບການແນະນຳໂດຍ American College of Obstetricians and Gynecologists (ACOG, ວິທະຍາໄລແພດປະສູດ ແລະ ແພດປະດົງຄັນຄົນອາເມລິກາ) ແລະ Centers for Disease Control and Prevention (CDC, ສູນຄວບຄຸມ ແລະ ປ້ອງກັນພະຍາດ) ເພື່ອໃຫ້ການປ້ອງກັນຕ້ານການເຈັບເປັນໜັກຈາກພະຍາດ COVID-19.

### ຄົນຖືພາມີຄວາມສ່ຽງຕໍ່ການເຈັບເປັນຮ້າຍແຮງ ແລະ ພາວະແຊກຊ້ອນ ຖ້າພວກເຂົາເປັນພະຍາດ COVID-19.

ການໄດ້ຮັບການເຈັບເປັນໜັກຈາກພະຍາດ COVID-19 ລະຫວ່າງ ຫຼື ຫຼັງການຖືພາອາດເພີ່ມຄວາມສ່ຽງຫຼາຍຕໍ່ການໄດ້ເຂົ້ານອນປິ່ນປົວທີ່ຕ້ອງໃຊ້ເຄື່ອງຊ່ວຍຫາຍໃຈ, ມີພາວະແຊກຊ້ອນຫຼາຍຢ່າງໃນລະຫວ່າງການຖືພາ, ການເກີດກ່ອນກຳນົດ ຫຼື ການຕາຍໃນທ້ອງ.

### ຍັງບໍ່ມີປະກົດການຊີ້ໃຫ້ເຫັນວ່າຢາວັກຊີນປ້ອງກັນພະຍາດ COVID-19 ເຫຼົ່ານີ້ເກີດຂໍ້ບົກພ່ອງຕໍ່ການເກີດລູກ, ການແທ້ງລູກ, ການເກີດກ່ອນກຳນົດ, ການຕາຍຄາທ້ອງ, ຫຼື ພາວະແຊກຊ້ອນອື່ນໆ.

ຢ່າງໃດກໍ່ຕາມ, ການເຈັບເປັນຈາກພະຍາດ COVID-19 ເປັນທີ່ຮູ້ຈັກກັນວ່າເຮັດໃຫ້ເກີດພາວະແຊກຊ້ອນເຫຼົ່ານີ້.

### ມັນປອດໄພທີ່ຈະສັກວັກຊີນເຖິງແມ່ນທ່ານຍັງໃຫ້ນົມລູກ.

ນ້ຳນົມແມ່ອາດຈະສົ່ງພູມຕ້ານທານໃຫ້ກັບລູກຂອງທ່ານເພື່ອຊ່ວຍປົກປ້ອງເຂົາເຈົ້າຈາກການຕິດເຊື້ອ COVID-19 ຈົນກວ່າເຂົາເຈົ້າຈະມີສິດໄດ້ຮັບການສັກຢາປ້ອງກັນເມື່ອອາຍຸໄດ້ 6 ເດືອນ.


**ແຫຼ່ງຂໍ້ມູນ:**

ການສັກວັກຊີນປ້ອງກັນ COVID-19 ໃນຂະນະທີ່ຖືພາ ຫຼື ໃຫ້ນົມລູກ (cdc.gov) | https://www.cdc.gov/coronavirus/2019-ncov/vaccines/recommendations/pregnancy.html (ເປັນ ພາສາອັງກິດ, ພາສາສະເປນ, ພາສາເກົາຫຼີ, ພາສາຫວຽດນາມ ແລະ ພາສາຈີນ ເທົ່ານັ້ນ)

ຄົນຖືພາ ແລະ ຜູ້ຖືພາບໍ່ດົນມານີ້ | CDC | https://www.cdc.gov/coronavirus/2019-ncov/need-extra-precautions/pregnant-people.html (ພາສາອັງກິດເທົ່ານັ້ນ)

ຢາວັກຊີນປ້ອງກັນພະຍາດ COVID-19 ແລະ ການຖືພາ: ສິ່ງທີ່ທ່ານຈຳເປັນຕ້ອງຮູ້ | Johns Hopkins Medicine | https://www.hopkinsmedicine.org/health/conditions-and-diseases/coronavirus/the-covid19-vaccine-and-pregnancy-what-you-need-to-know (ພາສາອັງກິດເທົ່ານັ້ນ)


Washington State Department of HEALTH

ເພື່ອຂໍເອົາເອກະສານນີ້ໃນຮູບແບບອື່ນ, ໃຫ້ໂທ 1-800-525-0127. ລູກຄ້າທີ່ຫູໜວກ ຫຼື ບໍ່ຄ່ອຍໄດ້ຍິນ, ກະລຸນາໂທ 711 (Washington Relay) ຫຼື ອີເມວຫາ civil.rights@doh.wa.gov.

Vaccinate WA

CovidVaccineWA.org

DOH 825-049 August 2023 Lao